ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 13: Funny Stories (Con.)

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 5:** ນິທານຊວນຫົວ (ຕໍ່)
**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

ເວລາ: 90 ນາທີ

| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)** | |
|---|---|
| **ສ້າງເປົ້າໝາຍ (Goals):**<br>ນັກຮຽນຈະຮູ້:<br>- ເລື່ອງ "ຊຽງໝັ່ງງຕອນພະຍາກິນຂີ້ແຮ້ງ"<br>- ເລື່ອງ "ຕາບອດຄຳຊ້າງ" | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ເລື່ອງ "ຊຽງໝັ່ງງຕອນພະຍາກິນຂີ້ແຮ້ງ"<br>- ເລື່ອງ "ຕາບອດຄຳຊ້າງ" | **ຄຳຖາມຫຼັກ (Questions):**<br>1) ເລື່ອງ "ຊຽງໝັ່ງງຕອນພະຍາກິນຂີ້ແຮ້ງ" ມີເນື້ອໃນຫຍັງແດ່?<br>2) ເລື່ອງ "ຕາບອດຄຳຊ້າງ" ມີເນື້ອໃນຫຍັງແດ່? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງເນື້ອໃນເລື່ອງ "ຊຽງໝັ່ງງຕອນພະຍາກິນຂີ້ແຮ້ງ" ແລະ ເລື່ອງ "ຕາບອດຄຳຊ້າງ". | **ທັກສະ (Skills):**<br>- ອະທິບາຍໄດ້ເຖິງເນື້ອໃນເລື່ອງ "ຊຽງ ໝັ່ງງຕອນພະຍາກິນຂີ້ແຮ້ງ" ແລະ ເລື່ອງ "ຕາບອດຄຳຊ້າງ". |
| **ຂັ້ນຕອນ 2 - ຫຼັກຖານປະເມີນ** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງເກດການກິດຈະກຳ<br>- ຜົນການກວດວຽກບ້ານ |
| **ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)** | |
| - **ສື່ການສອນມີ:**<br>ປຶ້ມຕຳລາວິຊາວັນນະຄະດີພື້ນເມືອງລາວ, ປຶ້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ວັນນະຄະດີຊັ້ນມັດທະຍົມປີທີ5, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກຳ. | |

- **ກິດຈະກຳການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເອົ້າເຖິງເນື້ອໃນ ແລະ ສິລະປະການປະດິດແຕ່ງຂອງນິທານຊວນຫົວ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 5**
**ນິທານຊວນຫົວ (ຕໍ່)**

**5. ເລື່ອງ "ຊຽງໝ້ຽງຕອນພະຍາກິນຂີ້ແຮ້ງ"** ( 30 ນາທີ )

**<u>ກິດຈະກຳ 1:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ເລື່ອງ "ຊຽງໝ້ຽງຕອນພະຍາກິນຂີ້ແຮ້ງ" ມີເນື້ອໃນຫຍັງແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (25 ນາທີ)

ຍ້ອນວ່າ ຫຼາຍເທື່ອຜ່ານມາແລ້ວ ພະຍາຖືກຊຽງໝ້ຽງທັກຫຼັງເຮັດໃຫ້ອັບອາຍ, ພະຍາຄິດຫງຸ່ງເຫງືອດຢູ່ໃນໃຈວ່າ: ຊິເຮັດແນວໃດຈຶ່ງຈະເດັດເສັ້ນຊຽງໝ້ຽງໃຫ້ຢູ່ຄາມື, ມື້ນີ້ພະຍາຄິດອອກໄດ້ວ່າຈະເຮັດໃຫ້ພະຫຍາປັນຍາຊຽງໝ້ຽງຫຼຸ້ຍປູ້ ບໍ່ໃຫ້ມີຄວາມສະຫຼາດຄືເກົ່າມາຫຼັງ, ພະຍາຈຶ່ງຕັດສິນໃຈຈະແກງແຮ້ງໃຫ້ຊຽງໝ້ຽງກິນ, ທຳມະດາແລ້ວແຮ້ງເປັນສັດຖ່ອຍຮ້າຍ ຫາກິນແຕ່ຂອງເນົ່າຂອງເໝັນ ຖ້າວ່າຊຽງໝ້ຽງໄດ້ກິນຊີ້ນຂອງແຮ້ງ ເຊື່ອວ່າພະຫຍາປັນຍາຂອງຊຽງໝ້ຽງຈະຫຼຸ້ຍປູ້ທັນທີໂລດ.

ຄິດໄດ້ແນວນັ້ນ ພະຍາກໍສັ່ງໃຫ້ຄົນ ໄປຊອກຫາເອົາແຮ້ງມາແກງ, ຈັດການປຸງແຕ່ງດ້ວຍເຄື່ອງຫອມຕ່າງໆເຮັດເປັນອາຫານທີ່ໜ້າຢາກກິນ, ເມື່ອພໍ່ຄົວແຕ່ງເຊັດຮຽບຮ້ອຍແລ້ວ ກໍເອົາໃສ່ພາເຂົ້າມາຕັ້ງໄວ້ກາງໂຮງ ບ່ອນທີ່ພະຍາເຄີຍນັ່ງຮັບປະທານອາຫານເປັນປະຈຳ, ພະຍາເຫັນໄດ້ໂອກາດດີ ກໍສັ່ງໄປນຳຊຽງໝ້ຽງມາຫາດ່ວນ, ພໍແຕ່ຄົນໄປເອີ້ນ ຊຽງໝ້ຽງກໍບໍ່ກ້າທີ່ຈະຂັດຂືນທ່ານພະຍາໄດ້ ເຖິງຈະມີເກົ້າວຽກສິບງານ ກໍຕ້ອງປະໄປເຝົ້າພະຍາຈົນໄດ້.

ເມື່ອຊຽງໝ້ຽງມາເຖິງ, ພະຍາກໍທຳທ່າຖາມວ່າ: ມຶງໄດ້ກິນງາຍແລ້ວບໍ່? ຊຽງໝ້ຽງຕອບວ່າຍັງບໍ່ທັນໄດ້ກິນເທື່ອ ຄິດວ່າພະຍາຕົນອ້າຍມີອາຫານດີແຊບຊອຍຈຶ່ງໃຫ້ຄົນໄປນຳເອີ້ນ. ພະຍາກໍຕອບວ່າອາຫານແຊບນົວແທ້ລະບໍແຕ່ວ່າກູກິນແຕ່ອາວເຊົ້າກ່ອນມຶງ, ກູຄິດຮອດມຶງຈຶ່ງໃຫ້ຄົນໄປນຳມາ ມື້ນີ້ກູສັ່ງໃຫ້ເຂົາແກງໄກ່ຜູໂອກໃຫຍ່ ກູກິນຜູ້ດຽວບໍ່ໝົດຍັງຢູ່ເຕັມພາເຂົ້າ ຄັນມຶງບໍ່ທັນກິນງາຍເທື່ອ ຮີບໄປກິນສາ ພວມແກງມັນຍັງຮ້ອນໆຢູ່ຫັ້ນນ່າ, ຊຽງໝ້ຽງກໍຖືກໃຈເຊື່ອຄິດວ່າພະຍາເປັນອ້າຍມີຄວາມຮັກແພງນ້ອງແທ້ ຈຶ່ງຟ້າວກິນແກງທີ່ພະຍາວ່າແກງໄກ່ນັ້ນທັນທີ, ຂະນະທີ່ຊຽງໝ້ຽງກິນຢູ່ນັ້ນຮູ້ສຶກວ່າມີກິ່ນກຸ່ຍ, ກິ່ນຄາວ ທັງຊີ້ນກໍຫຍາບເປັນຮຸ່ນເປັນຮ້າຍ ແຕ່ຊຽງກໍອົດສາກິນໄດ້ພໍຄາວ ຈຶ່ງກິນນ້ຳບ້ວນປາກແລ້ວຟ້າວຊອກຫາໝາກມາຄ້ຽວແກ້ປຸ້ນທ້ອງ.

ຝ່າຍພະຍາໄດ້ເຫັນວ່າຊຽງໝ້ຽງໄດ້ກິນແກງແຮ້ງເຂົ້າເປັນທີ່ຮຽບຮ້ອຍແລ້ວ ຈຶ່ງທຳທ່າຖາມຄືນວ່າເປັນແນວໃດບັກຊຽງໝ້ຽງ ກິນແກງໄກ່ຜູ້ໃຫຍ່ແຊບນົວດີບໍ່? ຊຽງໝ້ຽງຕອບວ່າ ໂອຍ! ຈັ່ງແມ່ນມັນບໍ່ເປັນຕາກິນຈັກດີ້ ບໍ່ຈັກຫຍາບ, ຈັກເໜັນ, ຈັກຄາວ, ຈັກກຸ່ຍ, ອັນນີ້ມັນບໍ່ແມ່ນຂອງໃຫ້ຄົນກິນມັນແມ່ນຂອງກິນໝາຂີ້ເຮື້ອນ ຫີບເອົາອອກໄປຖອກຖິ້ມດີກວ່າ, ພະຍາຈຶ່ງເວົ້າຄວາມຈິ່ງສູ່ຊຽງໝ້ຽງຟັງວ່າ ອັນນີ້ແມ່ນແກງແຮ້ງເຖົ້າໃຫ້ມຶງກິນ ເພື່ອວ່າພະຫຍາຂອງມຶງຈະໄດ້ຫຼຸ້ຍປູ້ອຶດອັ້ນຕັນປັນຍາ ບໍ່ສະຫຼຽວສະຫຼາດຄືເກົ່າເມື່ອຫຼັງອີກແລ້ວ, ຊຽງໝ້ຽງໄດ້ຮູ້ແນວນັ້ນກໍຄຶດຄຽດໃນໃຈ ຮູ້ວ່າພະຍາຊັງຕົນເຖິງຂະໜາດນີ້, ແຕ່ຊຽງໝ້ຽງບໍ່ປາກບໍ່ຈາຫຍັງມີແຕ່ຄຶດໃນໃຈວ່າ ມື້ໜຶ່ງຈະຕອບມືກັບພະຍາຢ່າງເໝາະສົມ, ຈາກນັ້ນຊຽງໝ້ຽງກໍລາພະຍາກັບຄືນເມື່ອເຮືອນ ແລ້ວຟ້າວຕົ້ມນໍ້າສົ້ມປ່ອຍ ສະຫົວເພື່ອລ້າງສ່ວຍສິ່ງສົກກະປົກອອກຈາກຮ່າງກາຍ, ທັງອ້ອນວອນໃຫ້ພະຍາປັນຍາຈິ່ງຍັງແກ່ກ້າຄືເກົ່າ.

ມື້ລຸນມາ, ຊຽງໝ້ຽງກໍທ່ຽວເລາະຊອກຫາເກັບເອົາຂີ້ແຮ້ງມາ ແລະ ພະຍາຍາມຕອກເປັນສໍສຳລັບຂຽນໜັງສື, ເມື່ອເຮັດສຳເລັດຮຽບຮ້ອຍແລ້ວ ກໍຟ້າວນຳໄປຖວາຍພະຍາຢູ່ໂຮງທັນທີ ພະຍາຈັບສໍຂຶ້ນມາເບິ່ງປາກົດວ່າກ້ຽງມົນງາມ ຈຶ່ງອອກປາກຖາມຊຽງໝ້ຽງວ່າ: ຊ່າງໄດ້ສໍງາມໆນີ້ມາແຕ່ທາງໃດ ມາວ່າຄືໃສອ້ອງຕ້ອງຄືແກ້ວແທ້ໆ ຊຽງໝ້ຽງບອກວ່າ ມີພໍ່ຄ້າຄວາຍທີ່ຮັກແຮງກັນເຂົາເອົາມາຕ້ອນ, ຜູ້ຂ້າຈຶ່ງນຳເອົາມາຖວາຍພະຍາອ້າຍ ເອົາໄວ້ໃຊ້ຂີດຂຽນນັ້ນໆນີ້ໆ. ພະຍາໄດ້ຟັງແລ້ວກໍຄິດດີໃຈວ່າຕົນເອງໄດ້ສໍດີຈຶ່ງລົງມືຂຽນທັນທີ, ແຕ່ຂຽນແນວໃດກໍບໍ່ອອກ ພະຍາຈຶ່ງເອົາລີ້ນເລຍ ເພື່ອໃຫ້ສໍຊຸ່ມຈະຂຽນອອກດີ. ພະຍາທັງຂຽນທັງເລຍຕັ້ງເທົ່າໃດເທື່ອ ສໍກໍບໍ່ຍອມອອກ ເລຍຈົນເມື່ອຍສໍກໍບໍ່ປາກົດຄອງອອກມາໃຫ້ເຫັນ, ຈຶ່ງຄິດແປກໃຈ ເລີຍຖາມຊຽງໝ້ຽງວ່າ: ສໍມຶງນີ້ງາມລ້າໆ ຂຽນບໍ່ອອກຈັກດີ້ ກູເລຍຈົນເມື່ອຍແລ້ວ ຊຽງໝ້ຽງໄດ້ໂອກາດກໍຕອບວ່າ: ຜູ້ຂ້ານີ້ກິນແກງໂຕມັນ ແຕ່ພະຍາພັດກິນຂີ້ມັນຄັກບໍ່. ເພິ່ນວ່າເປັນພະຍາລໍ້າສະເຫວີຍເມືອງທົ່ງແທນ ມາຄວ່າກິນຂີ້ແຮ້ງຂະຫຍອນຊໍ້າເພາະບໍ່ອາຍບ້ານອາຍເມືອງເຂົາຫວາ. ເພິ່ນວ່າຄົນຜູ້ໃດກິນຂີ້ແຮ້ງຕົວຜ່ອນເສຍສັກສີມາກແລ້ວ ຮ້າຍກວ່າສັດເດຍລະສານ ບໍ່ໃຊ່ຄົນຈິ່ງແທ້ ພະຍາໄດ້ຟັງ ກໍຄິດຄຽດໃຫ້ຊຽງໝ້ຽງສຸດໃຈ. ຄິດວ່າຈະຕົວະໃຫ້ຊຽງໝ້ຽງກິນແກງແຮ້ງໃຫ້ພະຫຍາມັນຫຼຸ້ຍປູ້ຕົນເອງສຳພັດກັບມາຮັບກຳຕອບຕາມສະໜອງ ເສຍໜ້າ ເສຍຕາຄອບພະຫຍາມັນອີກ (ພູວົງ ໜໍ່ດາລາ ແລະຄະນະ, 2018).

**6. ເລື່ອງ "ຕາບອດຄຳຊ້າງ"** (30 ນາທີ)

**<u>ກິດຈະກຳ 2:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ເລື່ອງ "ຕາບອດຄຳຊ້າງ" ມີເນື້ອໃນຫຍັງແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (25 ນາທີ)

ແຕ່ປາງກ່ອນບັງມີຊາຍຕາບອດ 6 ຄົນ, ມື້ໜຶ່ງບັງເອີນພວກເຂົາໄດ້ມາພົບກັນຢູ່ທີ່ກ້ອງຮົ່ມໄມ້ແຫ່ງໜຶ່ງ, ເມື່ອໄດ້ໂອ້ລົມສົນທະນາກັນແລ້ວຕ່າງກໍຮູ້ສຶກວ່າເປັນຄົນຕາບອດ, ເຂົາຈຶ່ງຕົກລົງເປັນສ່ຽວກັນ. ຂະນະທີ່ນັ່ງລົມກັນຢູ່ກ້ອງຮົ່ມໄມ້ນັ້ນພໍດີນາຍຄວານຊ້າງຜ່ານໄປແລ້ວຈຶ່ງເອີ້ນຖາມວ່າ:

- " ແມ່ນພວກເຈົ້າລົມກັນເລື່ອງໃດນໍ ຄືນັ່ງຫົວຟົດຟີ້ມີ່ມັນແທ້ "

- “ ໂອ້ຍ ! ລືມໄປຕາມພາສາຄົນຕາບອດຊັ້ນແລ້ວ, ຊິໄປໃສນໍ້ນັ້ນເນາະພວກເຂົາໄດ້ຖາມຂຶ້ນພ້ອມໆກັນ ”
- “ ເອົາຊ້າງໄປລ້ຽງຢູ່ໃກ້ໆນີ້ໝາ ” ຄວານຊ້າງຕອບ. ພໍໄດ້ຍິນຄໍາວ່າ: “ ຊ້າງ ” ຄົນຕາບອດເຫຼົ່ານັ້ນເຫັນວ່າໄດ້ໂອກາດ ຈຶ່ງມີຄົນໜຶ່ງກ່າວຂຶ້ນມາວ່າ:
- ໝູ່ເອີຍ ! ພວກເຮົາພາກັນໄປເບິ່ງຊ້າງເທາະ, ໄດ້ຍິນແຕ່ຄົນອື່ນເຂົາວ່າຊ້າງໆແຕ່ຈັກຊ້າງມັນມີຮູບຮ່າງສັນຖານແນວໃດກໍບໍ່ຮູ້. ເພື່ອບໍ່ໃຫ້ໃຜຕົວະໄດ້ ເຮົາຕ້ອງພາກັນໄປເບິ່ງໃຫ້ຮູ້ເຫັນປະຈັກແຈ້ງດ້ວຍຕົນເອງເທາະ. ເມື່ອໄປເຖິງແລ້ວ ພວກເຂົາກໍພາກັນຂໍອານຸຍາດຈາກຄວານຊ້າງ, ດ້ວຍຄວາມເຫັນໃຈຄວານຊ້າງຈຶ່ງບອກໃຫ້ຊ້າງໝອບລົງເພື່ອໃຫ້ຄົນຕາບອດເຫຼົ່ານັ້ນຄໍາເບິ່ງແລ້ວກໍ່ເວົ້າທັງຄຶດຢາກຫົວໃນໃຈວ່າ:
- “ ເອົາ ! ພວກເຈົ້າຈົ່ງເບິ່ງຕາມໃຈຊອບເທາະ, ຊິລູບຊິຄໍາແນວໃດກໍສຸດແຕ່ໃຈ ”

ຈາກນັ້ນຄົນຕາບອດທັງຫົກຈຶ່ງພາກັນເຂົ້າໄປຫາຊ້າງ ແລະ ຕາງກໍ່ລູບຄໍາເບິ່ງ ຄະນະທີ່ລູບຄໍາຢູ່ນັ້ນໃຜກໍ່ມີຄວາມຕື່ນເຕັ້ນ ແລະ ດີໃຈເພາະແຕ່ເກີດມາ ກໍແມ່ນເທື່ອດຽວນີ້ ທີ່ຕົນໄດ້ພົບກັບຊ້າງ ຈົນເຖິງຂັ້ນລູບຄໍາເບິ່ງຄັກແນ່. ເມື່ອລູບຄໍາເບິ່ງຈົນເປັນທີ່ແຈບໃຈຂອງໃຜລາວແລ້ວ ຈຶ່ງພາກັນຂອບໃຈນໍາຄວານຊ້າງແລ້ວກໍໜີໄປ, ພໍຮອດຕົ້ນໄຮໃຫຍ່ແຄມບ້ານ ຄົນຕາບອດທັງຫົກຈຶ່ງພາກັນແວ່ເຂົ້າຊຸ້ມຮົ່ມ, ຄະນະທີ່ພັກເຊົາຢູ່ນັ້ນມີຜູ້ໜຶ່ງໄດ້ເວົ້າຕາມຄວາມຮູ້ສຶກແລະ ຄວາມເຂົ້າໃຈຂອງຕົນອອກກ່ອນໝູ່ວ່າ:

- “ ບ໊າເນາະໝູ່ ! ຊາຄໍາຄົນລືຊາວ່າຊ້າງໆເຮົາກະວ່າສັດໃຫຍ່ສັດໂຕເອົາແທ້ເອົາວ່າ, ຕັ້ງທີ່ແທ້ຊ້າງມັນໂລດໂຕນ້ອຍໆນີ້ໜຶ່ງ ແລະ ຮູບຮ່າງລັກສະນະຂອງມັນກໍບໍ່ຕ່າງກັບວີພໍ່ຕູ້ເຮົາຢູ່ເຮືອນຫັ້ນ, ຕ່າງແຕ່ວ່າຊ້າງມັນພັດມີຂົນເທົ່ານັ້ນດອກ “ ພໍໝູ່ໄດ້ຟັງດັ່ງນັ້ນໃຜກໍຕົກຕະລຶງ ແລະ ສົ່ງສຽງອອກມາແຕກໂຄບໆຄຶດວ່າໝໍນີ້ມັນເອົາຄວາມໃສ່ມາເວົ້າຫຼື ມັນເປັນບ້າໄປແລ້ວຊັ້ນບໍ໊ ທັນໃດນັ້ນຈຶ່ງມີຜູໜຶ່ງເວົ້າສອດຂຶ້ນວ່າ:
- “ ມຶງພັດເບິ່ງຊ້າງແນວໃດຈັ່ງຊິວ່າຊ້າງຄືວີພໍ່ຕູ້ມຶງເກົ໊າະ ” ພໍເວົ້າຮອດໜີ້ໝູ່ຈຶ່ງຫົວຂຶ້ນອີກແລ້ວລາວຈຶ່ງເວົ້າຕໍ່ວ່າ: ມຶງຢ່າໄດ້ເວົ້າໄປໃສ່ອີກເດີ, ຄົນອື່ນໄດ້ຍິນເຂົາຊິຫົວຂວັນມຶງຕາຍແລ້ວ. ໃຜຊິວ່າຊ່າງຄືວີ ຊ້າງມັນຄືກັບສາກມອງຊັ້ນຕະຫວາ. ( ຄົນທີ່ຄໍາຖືກງາເວົ້າຂຶ້ນ )
- “ ໂຢ້ວ ! ຕາມກູຟັງມານີ້ສູສອງຄົນເວົ້າມານັ້ນມັນລະບໍ່ມີໃຜຖືກໄດ໋ນີ້, ດ້ວຍເຫດໃດຈຶ່ງເວົ້າວ່າຊ້າງຄືວີ ຄືສາກມອງ ທົ່ວທີບທົ່ວແດນແນວນັ້ນ, ຊ້າງມັນກໍຄືສູບທີ່ເຂົາໃຊ້ເວລາຕີມີດຕີພ້ານັ້ນຕະຫວາ ” ( ຄົນທີ່ຄໍາຖືກຂາເວົ້າຂຶ້ນ )
- ໂອ໊ຍ ! ກໍແມ່ນສູນໍໆ ແຮ່ງຟັງຫຼາຍຄົນເວົ້າມາກູແຮງໄປກັນໃຫຍ່, ກູຢາກຫົວແທ້ເດ ແມ່ນສູເອົາຄວາມໃດມາເວົ້ານໍ, ຈັ່ງໃດຈັ່ງຊິວ່າຊ້າງຄືວີ ຄືສາກມອງ ແລະ ຄືສູບແນວນັ້ນ, ຊ້າງມັນກໍຄືຟອຍນັ້ນຕົ໋ວ, ແນວທີ່ໃຊ້ກວາດເຮືອນຢູ່ທຸກມື້ສູກໍຍັງບໍ່ຮູ້ບໍ ( ຄົນທີ່ຄໍາຖືກຫາງເວົ້າຂຶ້ນ )
- “ ອັນຟອຍກວດເຮືອນໃຜຊິບໍ່ຮູ້, ແຕ່ມັນຜິດຢູ່ບ່ອນວ່າ: ຊ້າງຄືກັບຟອຍແມ່ນສູເບິ່ງຊ້າງແນວໃດຈຶ່ງພາກັນເຂົ້າໃຈຜິດພາດແນວນັ້ນແທ້, ເບິ່ງຊ້າງແຕ່ເຊົ້າຮອດງາຍ ລູບໆຄາໆຈົນອິດຈົນເມື່ອຍບາດແລ້ວພັດມາເວົ້າໄປທາງອື່ນ, ຊ້າງມັນກໍຄືກັບປີງໂຕບັກໃຫຍ່ນີ້ຊັ້ນຕົ໋ວ ” ( ຄົນທີ່ຄໍາຖືກງວງເວົ້າຂຶ້ນດ້ວຍຄວາມໝັ້ນໃຈ )
- “ ໂອຍ ! ຈັ່ງວ່າຫຼາຍຄົນຫຼາຍປາກຄືເພິ່ນວ່າແທ້ນໍ, ເຖິງສູຊິຖຽງກັນຈົນປາກຫ້ຽນ ກໍບໍ່ມີໃຜຖືກຈັກຄົນດອກ, ຂະໜາດວ່າຊິບໍ່ເຫັນຊ້າງຈັກເທື່ອຈົນເຖິງຂັ້ນໄດ້ຈັບໄດ້ບາຍປານນັ້ນ ສູກໍຍັງເຂົ້າໃຈຜິດພາດເນາະ, ຊ້າງມັນບໍ່ແມ່ນ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ສັດນ້ອຍໆດັ່ງທີ່ສູເຂົ້າໃຈດອກ, ມັນຄືສັດໃຫຍ່ຮູບຮ່າງມັນກໍຄືຝາເຮືອນນັ້ນແລ້ວ, ທີ່ຕ່າງກັບຝາເຮືອນກໍທີ່ວ່າມັນມີຂົນນັ້ນດອກ ( ຄົນທີ່ຄຳຖືກຂ້າງເວົ້າຂຶ້ນ ) ທັງຫົກຄົນຕ່າງຝ່າຍຕ່າງຜິດພາດຍ້ອນວ່າ ການສັງເກດບັນຫາຂອງເຂົາບໍ່ຄົບຖ້ວນ (ກຽງແກ້ວ ນວນນະວົງ ແລະຄະນະ, 2002).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
  - ເລື່ອງ “ຊຽງໝ້ຽງຕອນພະຍາກິນຂີ້ແຮ້ງ”
  - ເລື່ອງ “ຕາບອດຄຳຊ້າງ”

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

**V. ຂັ້ນຕັກເຕືອນ**

- ຄູແນະນຳນັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ກຽງແກ້ວ ນວນນະວົງ ແລະຄະນະ. (2002). ວັນນະຄະດີພື້ນເມືອງ 1 ລະຫັດ 630LLI 322. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ.

ພູວົງ ໜໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈຳວິຊາ



ປທ. ສົມທະເພີຍ ສີວົງສັກ